# ການຟື້ນຟູປ່າເລົ່າ (ຫຍ້າຄາ) ໃຫ້ຄືນມາໃຊ້ເຮັດການຜະລິດຄືນໃໝ່ ແລະ ຟື້ນຟູ ທົ່ງລ້ຽງສັດ ທີ່ເຊື່ອມໂຊມ ຢູ່ໃນເຂດພາກໃຕ້ ແຂວງໄຊຍະບູລີ

## *ເພື່ອເຮັດໃຫ້ ເຂດທີ່ເຊື່ອມໂຊມມີຄ່າຄືນໃໝ່*

Tran Quoc, H; Lienhard, P; Tivet, F; Sosomphou, T; Khamxaykhay, C; Chantharath, B; Panyasiri, K; Julien, P; Séguy, L



Landscape in Boten district

ພື້ນທີ່ການປູກຝັງ ໃນເມື່ອມີ ຫຍ້າຄາ ເກີດຂື້ນຫຼາຍ (ປົກຄຸມເນື້ອທີ່ທັງໝົດ) ສ່ວນໃຫຍ່ແລ້ວ ພື້ນທີ່ດັ່ງກ່າວ ຈະຖືກປະປ່ອຍ ໃຫ້ເປັນ ປ່າເລົ່າ ເນື່ອງຈາກວ່າ (I) ຕ້ອງໃດ້ໃຊ້ເວລາ ໃນການເສຍຫຍ້າສູງ (II) ຜະລິດຕະພາບ ຕົກຕ່ຳ ຍ້ອນວ່າ ຄວາມອຸດົມສົມບູນ ຂອງດິນ ໄດ້ຫຼຸດລົງ.
ນອກນັ້ນກໍຄື ປ່າເລົ່າ ທີ່ປະກອບດ້ວຍຫຍ້າຄາ ແມ່ນຈະບໍ່ມີ ພືດອາຫານສັດເກີດຂື້ນໄດ້ ສະນັ້ນ ຈຶ່ງເປັນ ສາເຫດເຮັດໃຫ້ ງົວຄວາຍ ບໍ່ເຂົ້າໄປກິນ. ແຕ່ເຖິງຢ່າງໃດກໍດີ, ການຄວບຄຸມ ຫຍ້າທີ່ບໍ່ເປັນປະໂຫຍດ ດັ່ງກ່າວ ຊຶ່ງໃນປະຈຸບັນ ໄດ້ກວມເອົາເນື້ອທີ່ອັນສຳຄັນ ໃນເຂດພາກໃຕ້ ແຂວງ ໄຊຍະບູລີ ດ້ວຍວິທີ ຊີວະວິທະຍານັ້ນ ເຫັນວ່າໄດ້ຮັບໝາກຜົນ ຢ່າງໜ້າເພິ່ງພໍໃຈ ສຳລັບ ຊາວກະສິກອນ ແລະ ຜູ້ລ້ຽງສັດ.

## ຈຸດປະສົງ

- ສ້າງເຕັກນິກ ຊີວະວິທະຍາ ສຳລັບ ປ້ອງກັນ ການ ຂະຫຍາຍຕົວ ຂອງຫຍ້າທີ່ບໍ່ເປັນປະໂຫຍດດັ່ງກ່າວ;
- ທຳການປັບປຸງ ຄຸນນະພາບ ຂອງແຫຼ່ງພືດ ອາຫານສັດ;
- ເພື່ອເປັນການ ຊ່ວຍເຮັດໃຫ້ ຊາວກະສິກອນ ກັບຄືນມາທຳການຜະລິດ ຢູ່ໃນແປງປູກຝັງເກົ່ານັ້ນໄດ້ ຫຼັງຈາກທີ່ປະໃຫ້ເປັນປ່າເລົ່າໄດ້ 3 ປີ

(ການສ້າງຄວາມ ອຸດົມສົມບູນ ດ້ວຍການນຳໃຊ້ ທາດອາຫານ ແບບບໍ່ບົກແຫ້ງຈັກເທື່ອ)

## ອຸປະກອນ ແລະ ວິທີການ

- ທົດລອງ ປູກພືດອາຫານສັດ ຊະນິດຕ່າງໆ ແທນ ຫຍ້າຄາ;
- ສ້າງແປງ ປູກຝັງ ເພື່ອ ການສາທິດ ຢູ່ຕາມ ພື້ນທີ່ຕ່າງໆ ທີ່ໄດ້ກຳນົດໄວ້;
- ແນວພັນ ຈຳນວນ 6 ຊະນິດ ທີ່ໄດ້ ທຳການ ທົດລອງ ມີຄື : *B. ruziziensis, humidicola, decumbens, Panicum maximum, Andropogon gayanus, Stylosanthes guianensis* (ປູກດ້ວຍເມັດ ຫຼື ດ້ວຍລຳຕົ້ນ ອີງຕາມແນວພັນ ທີ່ໄດ້ທົດລອງ)




ຕົວຢ່າງເຕັກນິກ ທີ່ໄດ້ ປະຕິບັດ ຢູ່ພາກໃຕ້ ຂອງແຂວງໄຊຍະບູລີ ຢູ່ໃນກອບ ຂອງການ ທົດລອງ ປູກພືດອາຫານສັດ ຊະນິດຕ່າງໆ ແທນຫຍ້າຄາ.

## ທ່າແຮງຂອງແນວພັນ ທີ່ໄດ້ທົດລອງ


*Panicum maximum*


*Brachiaria ruziziensis*


*Stylosanthes guianensis*

| ແນວພັນ | *ຄວບຄຸມຫຍ້າຄາ* (ຫຼັງຈາກປູກໄດ້ 1 ປີ) | ຄວາມສາມາດ ໃນການເກີດ ຄືນໃໝ່ | ຄວາມແທດເໝາະກັບ ພື້ນທີ່ | ການປູກ |
|---|---|---|---|---|
| *Brachiaria ruziziensis* | +++ | +++ | ++ | ລຳຕົ້ນ ຫຼື ເມັດ |
| *Brachiaria decumbens* | +++ | ++ | ++ | ລຳຕົ້ນ |
| *Brachiaria humidicola* | ++ | ++ | +++ | ລຳຕົ້ນ |
| *Panicum maximum* | +++ | +++ | ++ | ລຳຕົ້ນ ຫຼື ເມັດ |
| *Andropogon gayanus* | + | + | + | ລຳຕົ້ນ |
| *Stylosanthes guianensis* | ++ | + | ++ | ລຳຕົ້ນ ຫຼື ເມັດ |

**National Program of Agroecology**
PO Box 811, MAF-NAFRI, PDR Lao. Emails: naep@yahoo.com, ciradca@laotel.com. Tel: 021.77.00.93